## ຈະໃຊ້ຢາ Naloxone ໄດ້ຢ່າງໃດ

**ສະເປຣສີດໃສ່ດັງ** — ບໍ່ຕ້ອງມີການປະກອບໃສ່ກັນ.ຢ່າສູ່ກວດເບິ່ງອຸບປະກອນ. ອຸບປະກອນແຕ່ລະຢ່າງຈະໃຊ້ການໄດ້ແຕ່ເທື່ອດຽວເທົ່ານັ້ນ.ທ່ານອາດຈະ ຕ້ອງການອຸບປະກອນທັງສອງອັນ.



1. ຈີກທໍ່ເພື່ອຈະເອົາອຸບປະກອນອອກມາ.
2. ປະລິງແລະກຳເອົາຈອມຂອງຫົວສີດໃສ່ຮູດັງເບື້ອງໃດກໍໄດ້.
3. ບີບສູບລົງໃຫ້ແຫນ້ນເພື່ອຈະປ່ອຍປະຣິມານຢາເຂົ້າໃສ່ໃນຮູ້ດັງ.

**ສັກໃສ່ໄດ້** — ອັນນີ້ຕ້ອງມີການປະກອບໃສ່ກັນ.



1. ເອົາຝາອອກຈາກກ່ອງ Naloxone ແລະ ເປີດເຂັມອອກມາ.
2. ສອດເຂັມເຂົ້າໃສ່ຝາຢາງ ໂດຍປີ້ນກ່ອງຢາທາງເທິງລົງລຸ່ມ.ດຶງສູບຄືນ ແລະດູດ ເອົາ 1 ml.
3. ສັກຢາ Naloxone 1 ml ເຂົ້າໃສ່ແຂນທາງເທິງຫລືກ້າມເນື້ອແຂງ.

### ຊ່ວຍສູບລົມຫາຍໃຈ



1. ວາງຄົນລົງນອນຢຽດເຕັງຫລັງຂອງເຂົາເຈົ້າ.
2. ຍົກຫົວເຂົາເຈົ້າຂຶ້ນເບົາໆ. ບີບຮູດັງຂອງເຂົາເຈົ້າ.
3. ເປົ່າລົມເຂົ້າປາກຂອງເຂົາເຈົ້າ 2 ບາດ.
   ຫນ້າເອິກ (ບໍ່ແມ່ນທ້ອງ) ຄວນຈະເຕັ່ງຂຶ້ນ.
4. ເປົ່າລົມເຂົ້າປາກ 1 ບາດທຸກໆ 5 ວິນາທີຈົນກວ່າເຂົາເຈົ້າຈະເລີ້ມຕົ້ນຫາຍໃຈຫລືຕື່ນຂຶ້ນມາ.

## ການຕອບຕໍ່ການໃຊ້ຢາຝິ່ນຫລາຍ ເກີນໄປ:

Vນຣະຫວ່າງການໃຊ້ຢາຝິ່ນຫລາຍເກີນໄປ,ການຫາຍໃຈສາມາດຢຸດລົງ ໃນທຸກໆນາທີ.ການຮູ້ຈັກຂັ້ນຕອນທຈະເຮັດ **ໂດຍໄວໆ** ແລະເພີ້ມອອກຊີເຢັນຂື້ນຈະສາມາດຊ່ວຍຊີວິດໄວ້ໄດ້.

### 1. ກວດເບິ່ງການຕອບໂຕ້ຄືນ

**ຈັບສັ່ນຕົວຂອງເຂົາເຈົ້າແລະເອີ້ນຊື່ຂອງເຂົາເຈົ້າ**, ຖູຂໍ້ນີ້ວຂອງທ່ານແຮງໆໃສ່ກະດູກຫນ້າເອິກຂອງເຂົາເຈົ້າ — ທຳການຖູກະດູກຫນ້າເອິກເປັນເວລາ 10 ວິນາທີແຮງໆເທົ່າທີ່ເປັນໄປໄດ້.

### 2. ໂທຫາ 9-11

**ໂທຫາຜູ້ຮັບສາຍຊ່ວຍເຫລືອວ່າຄົນໃດຄົນນຶ່ງບໍ່ຫາຍໃຈແລະສະຖານທີ່ຄັກແນ່ຂອງທ່ານ.** ທ່ານບໍ່ຕ້ອງໄດ້ເວົ້າຫຍັງຫມົດກ່ຽວກັບຢາເສບຕິດຫລືຢາຢູ່ໃນເຫດການ.ກົດຫມາຍ WA State Good Samaritan Law ໃຫ້ການປ້ອງກັນເມື່ເວລາທ່ານໂທຫາເລກ9-1-1 ສຳລັບການໃຊ້ຢາຫລາຍເກີນໄປ (RCW 69.50.315).

### 3. ເອົາ Naloxone ໃຫ້

### 4. ເລີ້ມຕົ້ນຊ່ວຍຊູຊີບການຫາຍໃຈ

### 5. ຫລຳຄືນຂັ້ນຕອນທີ 3 & 4 ຖ້າຫາກວ່າບໍ່ມີຄຳຕອບ

### 6. ທ່ານອາດຈະຕ້ອງເອົາປະຣິມານຢາໃຫເທື່ອທີສອງຖ້າຫາກວ່າເຂົາເຈົ້າບໍ່ຕອບ ໂຕ້ຄືນຫລັງຈາກ 3 ນາທີ

### 7. ຢູ່ນຳເຂົາເຈົ້າຈົນກວ່າຫນ່ວຍຊ່ວຍເຫລືອຈະມາຮອດ

**ລໍຖ້ານຳເຂົາເຈົ້າຖ້າເປັນໄປໄດ້ຈົນກວ່າຄວາມຊ່ວຍເຫລືອຈະມາເຖິງ.** ຖ້າຫາກວ່າທ່ານບໍ່ສາມາດລໍຖ້າໄດ້,ກິ້ງເຂົາເຈົ້າໃສ່ທ່າການຟັກຟື້ນຢູ່ໃນສະຖານທີ່ປອດພັຍບ່ອນທີ່ເຂົາເຈົ້າສາມາດຊອກໄດ້.

ຖ້າຫາກວ່າບຸກຄົນເລີ້ມຕົ້ນຫາຍໃຈ, ແຕ່ວ່າເຂົາເຈົ້າບໍ່ຕື່ນຂຶ້ນມາກິ້ງເຂົາເຈົ້າໃສ່ທາງຂ້າງຂອງເຂົາເຈົ້າໃນທ່າຟັກຟື້ນ.

ບຸກຄົນຜູ້ທີ່ໄດ້ຮັບຢາ Naloxone ອາດຈະສັ່ນຕົວ,ຢູ່ໃນຄວາມເຈັບປວດ, ຫລືປະສົບພົບພໍ້ນຳອາການຖອນຕົວ. ຫລີກເວັ້ນເຂົາເຈົ້າຈາກການໃຊ້ຢາ. ຈືໄວ້ວ່າ, naloxone ເສື່ອມປະສິດທິພາບລົງໃນ 30-90 ນາທີ,

# ການຫລີກເວັ້ນການໃຊ້ຢາຝິ່ນຫລາຍເກີນໄປ & ຄຳແນະນຳການໃຊ້ Naloxone



## ທຸກໆຄົນຜູ້ທີ່ໃຊ້ Opioids ສາມາດໃຊ້ຫລາຍເກີນໄປໄດ້ແລະຄວນຈະຖືNaloxone ໄປນຳ

HCA 82-0377
LA (12/21) Laotian

Washington State Health Care Authority

# Opioids ແລະການໃຊ້ Opioids ຫລາຍເກີນໄປ

Opioids ລວມເອົາຢາສັ່ງຊື້ສຳລັບຄວາມເຈັບປວດ,ຢາເຮໂຣອິນ,ແລະຢາເຟນຕານິລ. Opioids ສາມາດເຮັດໃຫ້ການຫາຍໃຈຂອງບຸກຄົນທີ່ຈະຊ້າລົງຫລືຢຸດກໍໄດ້.ຖ້າຫາກວ່າຄົນໃດຄົນນຶ່ງໃຊ້ຢາ Opioids ຫລາຍກວ່າທີ່ຮ່າງກາຍຂອງເຂົາເຈົ້າສາມາດຕ້ານທານໄດ້,ເຂົາເຈົ້າສາມາດສູນເສັຽການມີສະຕິ,ຢຸດການຫາຍໃຈ,ແລະເສັຽຊີວິດ.ອັນນີ້ໄດຖືກເອີ້ນວ່າການໃຊ້ຢາ Opioids ຫລາຍເກີນໄປ.ການໃຊ້ຫລາຍເກີນໄປສາມາດເກີດຂຶ້ນໄດ້ໂດຍທັນທີຫລືໃນຊ່ວງເວລາ.

## ການສ່ຽງຕໍ່ການໃຊ້ Opioids ຫລາຍເກີນໄປ

- **ການເລີ້ມຕົ້ນການໃຊ້ Opioids ໃຫມ່ອີກຫລັກຈາກຢຸດພັກຫລືການປ່ຽນແປງໃນຊະນິດ/ປະຣິມານໃຊ້,** ອັນນີ້ລວມເອົາຫລັງຈາກການອອກຈາກຄຸກຫລືເຮືອນຈຳ,ຊະນິດຂອງການປິ່ນປົວຢາເສບຕິດບາງຢ່າງ,ແລະການເຂົ້າໂຮງພະຍາບານ. *ຄວາມຕ້ານທານສາມາດລຸດລົງໂດຍໄວ,ແມ້ແຕ່ໃນບໍ່ພໍເທົ່າໃດວັນ.*
- **ການປະສົມ Opioids ປົນກັນນຳສານ ລະງັບຊະນິດອື່ນ** ເຊັ່ນວ່າເຫລົ້າ,ເຄື່ອງຊ່ວຍນອນຫລັບ,ຫລື benzodiazepines (“benzos” ເຊັ່ນວ່າ Valium ແລະ Xanax). ໃຊ້ຢາແນວນຶ່ງແຕ່ລະເທື່ອຫລືໃຊ້ຢາແຕ່ລະຢ່າງຫນ້ອຍນຶ່ງ.ເລີ້ມຕົ້ນຫນ້ອຍນຶ່ງ ແລະໄປຊ້າໆ.
- **ໃຊ້ຢາສັ່ງຊື້ຈາກທ່ານຫມໍລະງັບຄວາມເຈັບປວດໃນປະຣິມານສູງແລະ/ຫລືຫລາຍກວ່າທັມມະດາທີ່ຖືກສັ່ງຊື້ຈາກທ່ານຫມໍ**
- **ກິນຢາລະງັບຄວາມເຈັບປວມຂອງຄົນອື່ນ**
- **ການໃຊ້ເຮໂຣອິນຫລືຢາຊະນິດອື່ນທີ່ບໍ່ໄດ້ເອົາມາຈາກຫ້າງຂາຍຢາຫລືບ່ອນແຈກຢາຍກັນຊາ,** ຍ້ອນຄວາມບໍຣິສຸດຫລື ທີ່ມາຊຶ່ງບໍ່ຮູ້ຈັກ
- **ໂຣກຫົວໃຈ,ຫມາກໄຂ່ຫລັງ,ຫລືປອດ,** ຊຶ່ງອາດຈະສະທ້ອນເຖິງຄວາມສາມາດຂອງຮ່າງກາຍທີ່ຈະຕໍ່ສູ້ຄືນຕໍ່ການໃຊ້ຢາຫລາຍເກີນໄປ.
- **ການເຄີຍມີການໃຊ້ຫລາຍເກີນໄປໃນຜ່ານມາ**
- **ການໃຊ້ຢູ່ຄົນດຽວ:** ທ່ານບໍ່ສາມາດເອົາ Naloxone ໃຫ້ທ່ານເອງໄດ້ໃນຣະຫວ່າງການໃຊ້ຫລາຍເກີນໄປ.ພະຍາຍາມທີ່ຈະໃຊ້ນຳຫມູ່ເພື່ອນຫລືຢູ່ອ້ອມແອ້ມຄົນອື່ນ.

## ເຄື່ອງຊີ້ບອກການໃຊ້ Opioid ຫລາຍເກີນໄປ

- ການຫາຍໃຈຊ້າໆຫລືບໍ່ມີ.ເຂົາເຈົ້າອາດຈະເບິ່ງຄ້າຍຄືວ່າເຂົາເຈົ້ານອນຫລັບຢູ່
- ສຽງກ້ອງ,ຫາຍໃຈຫອບ,ຫລືການນອນໂກນ
- ເລັບມືຫລືຮີມສົບເປັນສີມ້ານ,ຊ້ຳເຂົ້າ, ຫລືເປັນສີຟ້າ
- ຮີມສົບຖອດສີ,ຂາວອອກໃນບຸກຄົນຜິວດຳ
- ຜີວຫນັງເຢັນໆ,ຫລືເປັນຫລາຍ
- ບໍ່ຕອບໂຕ້ຕໍ່ການກະຕຸ້ນທາງນອກ

**ຖ້າຫາກວ່າບຸກຄົນສະແດງໃຫ້ເຫັນສີ່ງຊີ້ບອກຫລື ອາການຂອງການໃຊ້ Opioid ຫລາຍເກີນໄປ,ເອົາ Naloxone ໃຫ້ເຖິງແມ່ນວ່າທ່ານຈະບໍ່ຮູ້ຈັກວ່າສານແນວໃດທີ່ບຸກຄົນນັ້ນໃຊ້**

**Naloxone** ເປັນຢາທີ່ປອດພັຍທີ່ສາ ມາດຢຸດໄດ້ **ຊົ່ວຄາວ** ໃສ່ຜົນສະທ້ອນຂອງ Opioids ແລະຊ່ວຍບຸກຄົນໃຫ້ເລີ້ມຕົ້ນການຫາຍໃຈຄືນໃຫມ່ອີກ.

**Naloxone** ຈະໃຊ້ການໄດ້ນຳ Opioids ເທົ່ານັ້ນແລະຈະບໍ່ມີຜົນສະທ້ອນເຖິງຄົນໃດຄົນນຶ່ງຜູ້ທີ່ໃຊ້ສານຊະນິດອື່ນ.

ຢູ່ໃນຣັດວໍຊິງຕັນ,ທຸກໆຄົນສາມາດເອົາ Naloxone ມາໄດ້ຕາມຫ້າງຂາຍຢາທົ່ວໄປ,ເຖິງແມ່ນວ່າທ່ານຈະບໍ່ມີໃບສັ່ງຊື້ຈາກທ່ານຫມໍ.ທ່ານສາມາດໃຊ້ WA State Standing Order ເພື່ອຈະເອົາມາໂລໂຊນແທນໃບຊັ່ງຊື້ຈາກທ່ານຫມໍປະຖົມພະຍາບານ

**ເບິ່ງວີດີໂອການຝຶກຝົນກ່ຽວກັບການພົກປີ້ນການໃຊ້ຫລາຍເກີນໄປ**
**https://vimeo.com/357020563** ຫລື **stopoverdose.org/section/take-the-online-training/**

**ສແລກປ່ຽນສີ່ງຊ່ວຍເຫລືອອັນນີ້ນຳຫມູ່ເພື່ອນຫລືສະມາຊິກຄອບຄົວ**
ຖ່າຍຮູບດ້ວຍໂທຣະສັບມືຖືຂອງທ່ານ, ເກັບຮັກສາເຈັ້ຽງ່າຍໆກ່ຽວກັບ naloxone, ແລະຮຽນຮູ້ເພີ້ມເຕີມໄດ້ທີ່ **stopoverdose.org** ຫລື **bit.ly/naloxoneinstructions**.

**ຖ້າຫາກວ່າທ່ານໃຊ້ແນວໃດແນວນຶ່ງທີ່ບໍ່ຖືກສັ່ງຊື້ໂດຍທ່ານຫມໍໃຫ້ທ່ານຫລືໄດ້ມາຈາກຫ້າງຂາຍຢາຫລືຊື້ເອົາຈາກຫ້າງແຈກຢາຍກັນຊາ:**

**ໃຫ້ສົມມຸດວ່າສີ່ງທີ່ທ່ານໃຊ້ວ່າອາດຈະມີ fentanyl ຢູ່ໃນນັ້ນ,ຊຶ່ງອາດຈະເພີ້ມການສ່ຽງການໃຊ້ຫລາຍເກີນໄປໃນ Opioid ຢ່າງຫລວງຫລາຍ.**

ອັນນີ້ຈະບໍ່ໃຊ້ແທນການຝຶກຝົນເຣື່ອງການຕອບໂຕ້ຕໍ່ການໃຊ້ຫລາຍເກີນໄປທີ່ຄົບຖ້ວນຈາກທ່ານຫມໍພະຍາບານຫລືຄູສິດສອນເຣື່ອງສຸຂະພາບ.ສີ່ງບັນຈຸບາງຢ່າງຢູ່ໃນເອກສານຕີພິມອັນນີ້ໄດ້ຖືກຮັບຮູ້ເອົາມາຈາກ WA Department of Health ElA ADAI. ຄຳແນະນຳສຳລັບຢາສີດໃສ່ດັງ Naloxone ໄດ້ຖືກຮັບຮູ້ມາຈາກ Adapt Pharma/Emergent BioSolutions.